ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC
ທັນສະໄໝ ວ່ອງໄວ ໝັ້ນໃຈ
MODERN QUICK RELIABLE

ສຳນັກງານໃຫຍ່

ເລກທີ: 1621 /ທຄຕລ 2023

ນະຄອນຫຼວງວຽງຈັນ, ວັນທີ: 02 MAY 2023

# ໜັງສືແຈ້ງເຊີນ

**ເຖິງ** : ບັນດາບໍລິສັດ ຫ້າງຮ້ານຕົວແທນຈຳໜ່າຍອຸປະກອນໄອທີ ໃນນະຄອນຫຼວງວຽງຈັນ.

**ເລື່ອງ:** ແຈ້ງເຊີນເຂົ້າຮ່ວມຍື່ນຊອງປະມູນລາຄາອຸປະກອນສຳຮອງຂໍ້ມູນ (Backup Tape) ປະຈຳປີ 2023)

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຂໍແຈ້ງມາຍັງທ່ານຊາບບັນດາບໍລິສັດ ແລະ ຫ້າງຮ້ານຕົວແທນຈຳໜ່າຍເຄື່ອງໄອທີ ອຸປະກອນສຳຮອງຂໍ້ມູນ (Backup Tape) ເພື່ອມານຳໃຊ້ເຂົ້າໃນວຽກງານວິຊາສະເພາະຂອງ ທະນາຄານ ຈຶ່ງໄດ້ແຈ້ງເຊີນມາຍັງທ່ານເພື່ອຍື່ນຊອງເຂົ້າຮ່ວມປະມູນ ດັ່ງມີລາຍລະອຽດຂ້າງລຸ່ມນີ້:

| ລ.ດ | ລາຍລະອຽດ | ຈຳນວນ |
|---|---|---|
| 1. | **ອຸປະກອນ (Backup Tape) ໃຊ້ສຳຮອງຂໍ້ມູນ ຂອງລະບົບ ຖານຂໍ້ມູນ Maria DB ແລະ ແອັບຂອງລະບົບ Core Banking IBS.**<br>• **ລຸ້ນ**: LTO-8 Ultrium 30TB RW Data Cartridge<br>• **ຍີ່ຫໍ້:** ໃດກໍໄດ້<br>• **ໝາຍເຫດ**: ໃນແຕ່ລະອັນຕ້ອງມີ Barcode ຕິດມານຳ. | **140 ອັນ** |
| 2. | **ອຸປະກອນ (Backup Tape) ໃຊ້ສຳຮອງຂໍ້ມູນ ຂອງລະບົບ ຖານຂໍ້ມູນ oracle ທັງຫມົດ ແລະ ລະບົບ ທີ່ປິ່ນອ້ອມ.**<br>• **ລຸ້ນ**: LTO-7 Ultrium 15TB RW Data Cartridge<br>• **ຍີ່ຫໍ້:** ໃດກໍໄດ້<br>• **ໝາຍເຫດ**: ໃນແຕ່ລະອັນຕ້ອງມີ Barcode ຕິດມານຳ. | **60 ອັນ** |

- **ເງື່ອນໄຂຂອງບໍລິສັດ ຫ້າງຮ້ານຕົວແທນຈຳໜ່າຍອຸປະກອນໄອທີ ມີຄວາມຕ້ອງການຍື່ນຊອງປະມູນລາຄາຕ້ອງປະກອບເອກະສານໃຫ້ຄົບຖ້ວນດັ່ງລຸ່ມນີ້:**
- **<u>ເອກະສານ ຊອງທີ1:</u>**

1. ປະກອບເອກະສານໃນນາມນິຕິບຸກຄົນ ທີ່ດຳເນີນທຸລະກິດຈຳໜ່າຍເຄື່ອງອຸປະກອນໄອທີ, ດຳເນີນທຸລະກິດຢ່າງໜ້ອຍ 03 ປີຂຶ້ນໄປ, ສຳເນົາໃບທະບຽນວິສາຫະກິດ, ໃບຢັ້ງຢືນການເສຍອາກອນປີ 2021 ຫຼື 2022 ແລະ ໃບຢັ້ງຢືນການເປັນຕົວແທນຈຳໜ່າຍ (ຖ້າມີ) ).
2. ເອກະສານລາຍລະອຽດສະເປັກສິນຄ້າ, ການຮັບປະກັນສິນຄ້າ, ໄລຍະເວລາການຈັດສົ່ງສິນຄ້າ ແລະ ຂໍ້ມູນຕ່າງໆ ຕາມ format ທີ່ຕິດຄັດມາພ້ອມນີ້.



ເລກທີ 01, ຖະໜົນ: ປາງຄຳ, ເມືອງ ຈັນທະບຸລີ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ: 2925, ໂທລະສັບ: (856-21) 213200-1, 222495, 217904, 217898-9
ແຟັກ: (856-21) 213202, 223012, 223245, Website: http:/www.bcel.com.la, E-mail: bcelhqv@bcel.com.la, SWIFT Code: COEBLALA

3. ເອກະສານຂ້າງເທິງແມ່ນໃຫ້ຍື່ນກ່ອນ ວັນສຸກ **ວັນທີ 12/05/2023 ເວລາ 11:00 ໂມງ** ໂດຍການສົ່ງຟາຍເຂົ້າ E-mail: procurement@bcel.com.la ແລະ inspect-it@bcel.com.la ເພື່ອໃຫ້ສູນໄອທີໄດ້ກວດສະເປັກ.

- **ເອກະສານ ຊອງທີ2: (ປິດຊອງ)**

1. ໃບສະເໜີລາຄາໃຫ້ລະບຸລາຄາຫົວໜ່ວຍແຕ່ລະລາຍການ ແລະ ລວມມູນຄ່າອາກອນທັງໝົດເປັນສະກຸນເງິນກີບໃຫ້ຄົບຖ້ວນ.
2. ຜູ້ສະໜອງຕ້ອງວາງເງິນຄໍ້າປະກັນການປະມູນຕໍ່າສຸດ 2% ຂອງມູນຄ່າທັງໝົດ ໂດຍໜັງສືຄໍ້າປະກັນທີ່ອອກໂດຍທະນາຄານພາຍໃນ **(ວັນໝົດອາຍຸໜັງສືຄໍ້າປະກັນຕ້ອງເຖິງ ວັນທີ 18/06/2023)** ຫຼື ແຊັກທີ່ວິຊ້າແລ້ວ (ທຄຕລ ບໍ່ຮັບເງິນສົດ), ພາຍຫຼັງປະກາດຜົນ ທຄຕລ **ຈະສົ່ງໜັງສືຄໍ້າປະກັນດັ່ງກ່າວຄືນ.**
3. ໃນວັນພະຫັດ **ວັນທີ 18/05/2023 ເວລາ 09:00 ໂມງ** ແມ່ນມື້ເປີດຊອງປະມູນ ສະນັ້ນໃຫ້ຜູ້ສະໜອງທີ່ຜ່ານການຄັດເລືອກຈາກເອກະສານຊອງທີ 1 ມາຍື່ນຊອງລາຄາມາດ້ວຍຕົນເອງ ຫຼື ສົ່ງຜູ້ຕາງໜ້າເຂົ້າຮ່ວມທີ່ຫ້ອງປະຊຸມຊັ້ນ 5 ອາຄານ C.

- **ໝາຍເຫດ:**

- ທຄຕລ ຂໍສະຫງວນສິດ ປະຕິເສດຜູ້ສະໜອງທີ່ປະກອບເອກະສານ ບໍ່ຄົບຖ້ວນ ຫຼື ບໍ່ຖືກຕ້ອງຕາມການກໍານົດຂ້າງເທິງ.

- **ເງື່ອນໄຂຂອງສັນຍາລະຫວ່າງ ທຄຕລ ແລະ ຜູ້ສະໜອງທີ່ຊະນະການປະມູນ:**

1. ຜູ້ທີ່ຊະນະການປະມູນຈະໄດ້ເຊັນສັນຍາກັບ ທຄຕລ ແລະ ຮັບຜິດຊອບຄ່າທໍານຽມໃນການຈົດທະບຽນສັນຍາ.
2. ຖ້າຜູ້ຊະນະການປະມູນປະຕິເສດການເຊັນສັນຍາ ແມ່ນຕ້ອງໄດ້ຈ່າຍຄ່າເສຍຫາຍໃຫ້ແກ່ ທຄຕລ ໃນອັດຕາ 2% ຂອງມູນຄ່າລວມທີ່ສະເໜີປະມູນ.

- **ການຊໍາລະແມ່ນຈ່າຍງວດດຽວ 100% ຂອງມູນຄ່າ** ພາຍໃນ 25 ວັນລັດຖະການ ພາຍຫຼັງໄດ້ຮັບເຄື່ອງ ແລະ ກວດກາຄວາມຖືກຕ້ອງຈາກຄະນະກໍາມະການຕິດຕາມກວດກາ.

ດັ່ງນັ້ນ, ຈຶ່ງອອກແຈ້ງເຊີນມາຍັງທ່ານທີ່ມີຄວາມສົນໃຈເຂົ້າຮ່ວມຍື່ນຊອງປະມູນໃນຄັ້ງນີ້.

**ຜູ້ອໍານວຍການ**

ແຫ່ງ ສປປ ລາວ ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ BANQUE POUR LE COMMERCE EXTERIEUR LAO PUBLIC ນະຄອນ ຫລວງ ວຽງຈັນ

ນ. ສາຍສະໝອນ ຈັນທະຈັກ

## (ຕົວຢ່າງ) ລາຍລະອຽດເອກະສານການປະມູນ (ກະລຸນາຕື່ມຂໍ້ມູນ ແລະ ເຊັນຢັ້ງຢືນ)

- ອີງຕາມໃບແຈ້ງປະມູນ ສະບັບເລກທີ ………../ທຄຕລ, ລົງວັນທີ …………………..

| ລ/ດ | ຜູ້ສະໜອງ | ເງື່ອນໄຂ | | | | | | | | | ໝາຍເຫດ |
|---|---|---|---|---|---|---|---|---|---|---|---|
| | | ໃບທະບຽນວິສາຫະກິດ | ໃບຢັ້ງຢືນການເສຍອາກອນ 2020 | ໃບອະນຸຍາດດຳເນີນທຸລະກິດ 2021 | ໄລຍະເວລາໃນການດຳເນີນທຸລະກິດ | ຜົນງານຜ່ານມາ (ເຄີຍສະໜອງໃຫ້ພາກສ່ວນໃດແນ່) | ປະເພດ / ວັດສະດຸ / ຍີ່ຫໍ້ສິນຄ້າ | ປະເທດຜະລິດ | ການຮັບປະກັນສິນຄ້າ | ກຳນົດສົ່ງ (ວັນ) | |
| 1 | ບ/ສ……… | (xxx/ 02.01.2015) | (xxx/ 02.01.2015) | (xxx/ 02.01.2015) | …. ປີ | (ໃຫ້ລະບຸ) | | ປະເທດ……. | …. ປີ | …… | |

ໝາຍເຫດ: ຂໍ້ມູນທີ່ແຈ້ງຂ້າງເທິງນີ້ ເປັນຄວາມຈິງທຸກປະການ, ຖ້າມີຂໍ້ມູນຜິດພາດ ຂ້າພະເຈົ້າຂໍຮັບຜິດຊອບເອງທຸກປະການ.

ນະຄອນຫຼວງວຽງຈັນ, ວັນທີ ……………………

ຜູ້ອຳນວຍການບໍລິສັດ

ຜູ້ປະສານງານບໍລິສັດ:

ຊື່:

ໂທ: